**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

------------ 000 ------------

ແຂວງຊຽງຂວາງ

ສໍານັກງານປົກຄອງແຂວງ

ເລກທີ 22 /ຈຂ.ຊຂ

ວັນທີ 08 / 12 / 2015

# ຄໍາສັ່ງແນະນໍາ
## ຂອງທ່ານ ເຈົ້າແຂວງ ແຂວງຊຽງຂວາງ
## ວ່າດ້ວຍການຈັດຕັ້ງປະຕິບັດ ແຈ້ງການຂອງຫ້ອງວ່າການລັດຖະບານ

**ເຖິງ :** ບັນດາທ່ານ ຫົວໜ້າພະແນກການ, ກົມກອງທຽບເທົ່າຂອງແຂວງ, ບັນດາ ທ່ານ ເຈົ້າເມືອງໃນທົ່ວແຂວງ ແລະ ບັນດາຫົວໜ່ວຍທຸລະກິດໄມ້ ທີ່ເຄື່ອນໄຫວທຸລະກິດຢູ່ແຂວງຊຽງຂວາງ.

- **ອີງຕາມ:** ໜັງສືແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບ ເລກທີ 1843/ຫລບ, ລົງວັນທີ 2/11/2015 ກ່ຽວກັບການແກ້ໄຂບັນຫາການຕັດໄມ້ ຢູ່ເຂດຕໍາ10(ຍອດນໍ້າໂມ້-ນໍ້າທົ່ງ) ເມືອງໝອກ, ແຂວງຊຽງຂວາງ.

ເພື່ອເປັນການຈັດຕັ້ງປະຕິບັດ ຜັນຂະຫຍາຍແຈ້ງການ, ມະຕິຄໍາສັ່ງຂອງຂັ້ນເທິງໃນການຄຸ້ມຄອງປ່າໄມ້ ແລະ ການຂຸດຄົ້ນໄມ້ໃຫ້ສອດຄ່ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

**ເຈົ້າແຂວງ, ແຂວງຊຽງຂວາງ ອອກຄໍາສັ່ງແນະນໍາດັ່ງນີ້:**

1. ນັບແຕ່ວັນທີ 1 ເດືອນ12 ປີ 2015 ເປັນຕົ້ນໄປ ຫ້າມບໍ່ໃຫ້ບັນດາຫົວໜ້າພະແນກການ, ບັນດາເຈົ້າເມືອງອອກເອກະສານອະນຸຍາດ ກ່ຽວກັບການຂຸດຄົ້ນໄມ້ທຸກສະນິດ, ບໍ່ວ່າຈະເປັນເງື່ອນໄຂໃດກໍ່ຕາມ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ, ບັນດານິຕິກໍາທີ່ແຂວງ, ບັນດາພະແນກການ ແລະ ອໍານາດການປົກຄອງເມືອງອອກຂັດກັບແຈ້ງການ ສະບັບເລກທີ 1843/ຫລບ, ລົງວັນທີ 2/11/2015 ແມ່ນໃຫ້ລົບລ້າງທັງໝົດ.

2. ໂກຕ່າໄມ້ທີ່ ແຂວງ, ບັນດາພະແນກການ, ເມືອງໄດ້ອະນຸມັດເພື່ອສໍາລະໂຄງການກໍ່ສ້າງພື້ນຖານໂຄງລ່າງຍັງຄ້າງປະຕິບັດຜ່ານມາໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານໃຫ້ລົບລ້າງທັງໝົດ.

3. ມອບໃຫ້ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະແນກ ກະສິກໍາ ແລະ ປ່າໄມ້ ,ພະແນກ ການເງິນ, ພະແນກອຸດສາຫະກໍາ ແລະ ການຄ້າ, ບັນດາທ່ານເຈົ້າເມືອງ, ຂະແໜງການກ່ຽວຂ້ອງ ແລະ ບັນດາທຸລະກິດໄມ້ ເປັນເຈົ້າໃນການຈັດຕັ້ງປະຕິບັດແຈ້ງການຂອງຫ້ອງວ່າການ ສະບັບເລກທີ1843/ຫລບ, ລົງວັນທີ 2/11/2015.

4. ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າແຂວງ ແຂວງຊຽງຂວາງ

ບົວຄອນ ສີນວນທອງ